ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 30/12/2024 ຫາ 03/01/2025




ພິທີເປີດຢ່າງເປັນທາງການ ຂອງໂຄງການສ້າງເສດຖະກິດສີຂຽວ ແລະ ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ພິທີເປີດຢ່າງເປັນທາງການ ຂອງໂຄງການສ້າງເສດຖະກິດສີຂຽວ ແລະ ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ພິທີເປີດຢ່າງເປັນທາງການຂອງໂຄງການ ສ້າງເສດຖະກິດສີຂຽວ ແລະ ການປັບຕົວຕໍ່ການ ປ່ຽນແປງດິນຟ້າອາກາດດ້ານກະສິກຳ ຫຼື Green CUP Project ໄດ້ຈັດຂຶ້ນໃນວັນທີ 05 ທັນວາ 2024 ທີ່ໂຮງແຮມໝອນທອງ, ເມືອງຫ້ວຍຊາຍ, ແຂວງ ບໍ່ແກ້ວ ໂດຍການເປັນປະທານຂອງ ທ່ານ ປອ. ນ. ຈັນທະຄອນ ບົວລະພັນ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ແລະ ເປັນກຽດເຂົ້າຮ່ວມໂດຍ ທ່ານ ທອງຈັນ ມະນີໄຊ ເຈົ້າແຂວງບໍ່ແກ້ວ, ທ່ານ ນ. ຊີບ-ແລັງ ຊູອອກ ເອກອັກຄະລັດຖະທູດຝຣັ່ງ ປະຈຳ ລາວ, ທ່ານ ມາກ ກາລາເຣີ ເອກອັກຄະລັດຖະທູດ ສະຫະພາບເອີຣົບ ປະຈຳ ລາວ. ມີບັນດາຫົວໜ້າ-ຮອງຫົວໜ້າກົມ ທີ່ມາຈາກກະຊວງກະສິກຳ ແລະ ປ່າໄມ້, ກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ, ກະຊວງອຸດສະຫາກຳ ແລະ ການຄ້າ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ບຸນຈັນ ກິມບຸນຍະສິດ ຫົວໜ້າກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ລາຍງານໃຫ້ຮູ້ວ່າ: ໂຄງການ Green CUP ແມ່ນໂຄງການໜຶ່ງທີ່ເສີມສ້າງຄວາມເຂັ້ມແຂງໃນການຜະລິດກາເຟ ແລະ ໃບຊາ ສອດຄ່ອງກັບແຜນຍຸດທະສາດການສົ່ງເສີມກາເຟລາວ ແລະ ແຜນງານການສົ່ງອອກກາເຟ. ຈຸດປະສົງຫຼັກຂອງໂຄງການແມ່ນ: ເພື່ອເສີມສ້າງຄວາມເຂັ້ມແຂງດ້ານການພັດທະນາຄຸນນະພາບຂອງຂະແໜງກາເຟ ແລະ ຊາ ດ້ວຍການປະຕິບັດລະບົບນິເວດກະສິກຳຂອງຊຸມຊົນ, ສາມາດປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ ແລະ ພາຍໃຕ້ຕ່ອງ




ໂສ້ມູນຄ່າທີ່ມີສ່ວນຮ່ວມ ໂດຍການສົ່ງເສີມບົດບາດຍິງ-ຊາຍ. ໂຄງການປະກອບດ້ວຍ 4 ອົງປະກອບວຽກງານຫຼັກຄື: 1. ສ້າງໃຫ້ມີແຫຼ່ງລາຍໄດ້ຈາກຫຼາຍຢ່າງ ແລະ ປັບປຸງເຕັກນິກການຜະລິດ, ການເຂົ້າເຖິງອາຫານທີ່ຫຼາກຫຼາຍ ທັງມີຜົນດີຕໍ່ສຸຂະພາບ; 2. ສະໜັບສະໜູນການຄົ້ນຄ້ວາ-ທົດລອງ, ການສຶກສາ/ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງດ້ານວິຊາການກາເຟ ແລະ ຊາ, ໄປຄຽງຄູ່ກັບການປູກຈິດສຳນຶກດ້ານໂພຊະນາການ; 3. ສົ່ງເສີມການຜະລິດກາເຟ ແລະ ຊາ ໃຫ້ມີຄຸນນະພາບ ແລະ ມີມູນຄ່າສູງກວ່າເກົ່າ ຢູ່ເຂດພາກເໜືອ; 4. ປັບປຸງການຄຸ້ມຄອງຂະແໜງກາເຟ ແລະ ຊາ, ພັດທະນາ ແລະ ສ້າງການຍອມຮັບເຄື່ອງໝາຍຄຸນນະພາບຂອງຜະລິດຕະພັນ; ແລະ 5. ວຽກຄຸ້ມຄອງໂຄງການ ແລະ ກິດຈະກຳອື່ນອ້ອມ. ຊຶ່ງລວມມູນຄ່າ ທັງໝົດ 13.650.000 ເອີໂຣ, ໄລຍະການຈັດຕັ້ງປະຕິບັດ 4 ປີ: ເລີ່ມແຕ່ປີ 2024 ຈົນຮອດທ້າຍປີ 2028.

**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສີງຄານ
ທ່ານ ສີສະຫວາດ ທອນດາລາ

**ບັນນາທິການ:**
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
YouTube Youtube: ລາຍການກະສິກຳ;ແລະ ປ່າໄມ້;